**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ:..1727.../ພບ

ນະຄອນຫຼວງວຽງຈັນ, ວັນທີ.31..ທັນວາ 2021

# ຄຳແນະນຳ

## ການພິຈາລະນາໂຄງການລົງທຶນຂອງລັດ ຂອງຂະແໜງພະລັງງານ ແລະ ບໍ່ແຮ່

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15/12/2015;
- ອີງຕາມ ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 09/05/2017;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017;
- ອີງຕາມ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 0889/ກຜທ, ລົງວັນທີ 09/06/2021;
- ອີງຕາມ ດຳລັດ ວ່າດ້ວຍການເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງ ກົມແຜນການ ແລະ ການຮ່ວມມື ສະບັບເລກທີ 1520/ພບ.ກຜຮ.ປຜ, ລົງວັນທີ 28/12/2021.

**ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນຜັນຂະຫຍາຍການຈັດຕັ້ງປະຕິບັດເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15/12/2015, ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 09/05/2017 ແລະ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017 ມາເປັນຄຳແນະນຳສະເພາະສຳລັບການພິຈາລະນາໂຄງການລົງທຶນຂອງລັດ ຂອງຂະແໜງພະລັງງານ ແລະ ບໍ່ແຮ່.

ເພື່ອເປັນຫຼັກການ ແລະ ເປັນບ່ອນອີງໃຫ້ແກ່ ການພິຈາລະນາໂຄງການລົງທຶນຂອງລັດ ທີ່ນຳໃຊ້ງົບປະມານແຫ່ງລັດ ບ້ວງ 67 ເຂົ້າໃນວຽກງານການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ແລະ ໂຄງການສະໜອງວັດຖຸປະກອນ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່.

ເພື່ອໃຫ້ມີຄວາມເຂົ້າໃຈເປັນເອກະພາບກັນທົ່ວຂະແໜງການ, ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການ ມີຄວາມໂປ່ງໃສ, ເປັນທຳ ແລະ ສາມາດກວດສອບໄດ້; ຮັບປະກັນດ້ານປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## II. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ໂຄງການລົງທຶນຂອງລັດ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່** ໝາຍເຖິງ ບັນດາໂຄງການທີ່ນໍາໃຊ້ງົບປະມານແຫ່ງລັດ ບ້ວງ 67 ເຂົ້າໃນວຽກງານການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ແລະ ໂຄງການສະໜອງວັດຖຸປະກອບ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ທີ່ສະພາແຫ່ງຊາດ ຫຼື ສະພາຂັ້ນແຂວງ/ນະຄອນຫຼວງ ໄດ້ຮັບຮອງ.
2. **ການປະເມີນໂຄງການ** ໝາຍເຖິງ ການຕີລາຄາທາງດ້ານຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ, ຜົນກະທົບ, ຄວາມຍືນຍົງ, ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກກະສານໂຄງການກ່ອນພິຈາລະນາບັນຈຸໂຄງການ ເຂົ້າແຜນການລົງທຶນຂອງລັດ.
3. **ໂຄງການລົງທຶນຂອງລັດປະເພດ I** ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 400.000.000.000 (ສີ່ຮ້ອຍຕື້) ກີບຂຶ້ນໄປ, ໄລຍະປະຕິບັດໂຄງການ ບໍ່ເກີນ ເຈັດປີ.
4. **ໂຄງການລົງທຶນຂອງລັດປະເພດ II** ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 200.000.000.000 (ສອງຮ້ອຍຕື້) ກີບ ຫາ 400.000.000.000 (ສີ່ຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫົກປີ.
5. **ໂຄງການລົງທຶນຂອງລັດປະເພດ III** ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 100.000.000.000 (ໜຶ່ງຮ້ອຍຕື້) ກີບ ຫາ 200.000.000.000 (ສອງຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫ້າປີ.
6. **ໂຄງການລົງທຶນຂອງລັດປະເພດ IV** ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 20.000.000.000 (ຊາວຕື້) ກີບ ຫາ 100.000.000.000 (ໜຶ່ງຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ສີ່ປີ.
7. **ໂຄງການລົງທຶນຂອງລັດປະເພດ V** ແມ່ນໂຄງການທີ່ມີມູນຄ່າແຕ່ 20.000.000.000 (ຊາວຕື້) ກີບລົງມາ, ໄລຍະປະຕິບັດໂຄງການ ບໍ່ເກີນ ສາມປີ.
8. **ໂຄງການສົ່ງເສີມວິຊາການທີ່ຕິດພັນກັບການກໍ່ສ້າງ** ໝາຍເຖິງ ໂຄງການຄຸ້ມຄອງໂຄງການ, ໂຄງການສໍາຫຼວດ-ອອກແບບ, ຄ່າວ່າຈ້າງທີ່ປຶກສາ, ຄ່າຊົດເຊີຍເວນຄືນສິ່ງກີດຂວາງ ແລະ ໂຄງການສຶກສາຄວາມເປັນໄປໄດ້ (FS).
9. **ໂຄງການສົ່ງເສີມວິຊາການທີ່ບໍ່ຕິດພັນກັບການກໍ່ສ້າງ** ໝາຍເຖິງ ໂຄງການຝຶກອົບຮົມ, ຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ, ສົ່ງເສີມການຜະລິດ ແລະ ໂຄງການສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ.
10. **ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ** ໝາຍເຖິງ ໂຄງການກໍ່ສ້າງ ແລະ ປັບປຸງຕາຂ່າຍໄຟຟ້າ ແຮງດັນກາງ, ແຮງດັນຕໍ່າ ແລະ ຕິດຕັ້ງໝໍ້ແປງ; ໂຄງການກໍ່ສ້າງ ແລະ ສ້ອມແປງຕຶກອາຄານ ແລະ ອື່ນໆ.
11. **ໂຄງການສະໜອງວັດຖຸປະກອນ** ໝາຍເຖິງ ໂຄງການຈັດຊື້ພາຫະນະ, ເຄື່ອງເຕັກນິກ-ວິຊາການ ແລະ ຊັບສິນ, ວັດຖຸອຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນິເຈີທີ່ຈໍາເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່.

## III. ການສະເໜີ ແລະ ການກໍານົດໂຄງການລົງທຶນຂອງລັດຂອງຂະແໜງການ

### 3.1 ການສະເໜີໂຄງການ

#### 3.1.1 ພາກສ່ວນສະເໜີໂຄງການ

ພາກສ່ວນສະເໜີໂຄງການ ແມ່ນປະກອບມີ: ຫ້ອງການກະຊວງ, ບັນດາກົມ ແລະ ສະຖາບັນຂອງກະຊວງພະລັງງານ ແລະ ບໍ່ແຮ່; ບັນດາພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ ແລະ ນະຄອນຫຼວງ.

### 3.1.2 ຄ່າໃຊ້ຈ່າຍໃນການປະຕິບັດກິດຈະກຳໂຄງການລົງທຶນຂອງລັດຂອງຂະແໜງການ

ຄ່າໃຊ້ຈ່າຍໃນການປະຕິບັດກິດຈະກຳທີ່ສາມາດປະກອບເຂົ້າໃນໂຄງການລົງທຶນຂອງລັດ ມີດັ່ງນີ້:

1) ການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ແລະ ເຄຫາສະຖານ ປະກອບມີ:
   - ຄ່າໃຊ້ຈ່າຍໃນການກະກຽມໂຄງການມີ: ການເກັບກຳຂໍ້ມູນ, ວິເຄາະ, ວິໄຈຂໍ້ມູນ ແລະ ສ້າງບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ການສຳຫຼວດ-ອອກແບບໂຄງການ, ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ຄ່າຊົດເຊີຍ ແລະ ເວນຄືນສິ່ງກີດຂວາງໃນການປະຕິບັດໂຄງການ;
   - ຄ່າໃຊ້ຈ່າຍໃນການປະຕິບັດໂຄງການມີ: ຄ່າວັດສະດຸ, ອຸປະກອນ ແລະ ຄ່າແຮງງານ;
   - ຄ່າໃຊ້ຈ່າຍໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
   - ຄ່າໃຊ້ຈ່າຍທົດລອງນຳໃຊ້;
   - ຄ່າໃຊ້ຈ່າຍຄຸ້ມຄອງໂຄງການ;
   - ຄ່າທີ່ປຶກສາໂຄງການ;
   - ຄ່າອາກອນ;
   - ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ.
2) ການສະໜອງວັດຖຸປະກອນ ປະກອບມີ:
   - ຄ່າຊື້ພາຫະນະ ແລະ ວັດຖຸປະກອນຮັບໃຊ້ການຜະລິດ;
   - ຄ່າຊື້ເຄື່ອງເຕັກນິກ-ວິຊາການ ແລະ ຊັບສິນ;
   - ຄ່າຊື້ວັດຖຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່.

### 3.1.3 ການກຳນົດໂຄງການລົງທຶນຂອງລັດຂອງຂະແໜງການ

1) ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ຕ້ອງໄດ້ປະຕິບັດ ດັ່ງນີ້: ການກຳນົດມູນຄ່າໂຄງການໃຫ້ອີງໃສ່ແບບແຜນຜັງກໍ່ສ້າງ, ສ້ອມແປງ, ມາດຖານເຕັກນິກ, ລາຄາຫົວໜ່ວຍ ໂດຍຜ່ານການຢັ້ງຢືນທາງການຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ. ບັນດາໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 20.7.
2) ໂຄງການສົ່ງເສີມວິຊາການທີ່ຕິດພັນກັບການກໍ່ສ້າງ ຕ້ອງໄດ້ປະຕິບັດ ດັ່ງນີ້:
   - ໂຄງການຄຸ້ມຄອງໂຄງການ (ການຕິດຕາມໂຄງການ ຂອງການນຳຂັ້ນສູນກາງ, ຂັ້ນແຂວງ ແລະ ວິຊາການປະຈຳພາກສະໜາມ, ການກວດກາ ແລະ ການປະເມີນຜົນສຳເລັດການຈັດຕັ້ງປະຕິບັດໂຄງການ ຂອງຄະນະຮັບຜິດຊອບໂຄງການແຕ່ລະໄລຍະ) ແມ່ນໃຫ້ຄິດໄລ່ຕາມມາດຕາ 4 ຂອງຂໍ້ຕົກລົງລັດຖະມົນຕີກະຊວງການເງິນ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018 ໃນກໍລະນີມີການປັບປຸງໃໝ່ກໍ່ໃຫ້ຖືເອົາສະບັບປັບປຸງໃໝ່ນັ້ນປ່ຽນແທນ.
   - ໂຄງການສຳຫຼວດ-ອອກແບບ, ຄ່າວ່າຈ້າງທີ່ປຶກສາ, ຄ່າຊົດເຊີຍເວນຄືນສິ່ງກີດຂວາງ ແລະ ໂຄງ

ການສຶກສາຄວາມເປັນໄປໄດ້ (FS) ການຄິດໄລ່ມູນຄ່າໂຄງການ ແມ່ນຕ້ອງໄດ້ຢັ້ງຢືນເປັນທາງການ ໂດຍອີງໃສ່ໜ້າວຽກ ແລະ ລາຄາຫົວໜ່ວຍ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ. ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກ ທີ 30/ສພຊ ລົງວັນທີ 2 ພະຈິກ 2017.

3) ໂຄງການສະໜອງວັດຖຸປະກອບ ຕ້ອງໄດ້ປະຕິບັດ ດັ່ງນີ້:
- ການຄິດໄລ່ມູນຄ່າໂຄງການ ແມ່ນໃຫ້ອີງໃສ່ມາດຖານເຕັກນິກ ແລະ ຄຸນນະພາບຂອງວັດຖຸປະກອບ ຕາມລາຄາຕົວຈິງໃນທ້ອງຕະຫຼາດທີ່ມີໃບຢັ້ງຢືນລາຄາ ໂດຍໃຫ້ມີການສົມທຽບລາຄາຢ່າງໜ້ອຍ 3 ແຫ່ງ ແລະ ຖືເອົາລາຄາສະເລ່ຍທີ່ສົມເຫດສົມຜົນ ເປັນລາຄາຂຶ້ນແຜນ.
- ຄ່າໃຊ້ຈ່າຍໃນການຝຶກອົບຮົມການນຳໃຊ້ອຸປະກອນ (ຖ້າມີ) ໃຫ້ລວມຢູ່ໃນມູນຄ່າຂອງອຸປະກອນ.

ບັນດາໂຄງການສະໜອງວັດຖຸປະກອບ ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017.

### 3.1.4 ການປະກອບເອກະສານສະເໜີໂຄງການລົງທຶນຂອງລັດຂອງຂະແໜງການ

ການປະກອບເອກະສານສະເໜີໂຄງການລົງທຶນຂອງລັດ ສຳລັບໂຄງການສະເໜີໃໝ່ ຕ້ອງປະຕິບັດ ດັ່ງນີ້:

1) ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ຕ້ອງປະກອບເອກະສານ ດັ່ງນີ້:
1. ຂໍ້ຕົກລົງຂອງ ລັດຖະມົນຕີ/ຫົວໜ້າອົງການລັດທຽບເທົ່າກະຊວງ/ເຈົ້າແຂວງ/ເຈົ້າຄອງນະຄອນ ທີ່ອະນຸມັດໃຫ້ສຶກສາຄວາມເປັນໄປໄດ້ ຫຼື ສຳຫຼວດ-ອອກແບບໂຄງການ;
2. ບົດສະເໜີໂຄງການ (ອີງຕາມແບບຟອມ ຂອງກະຊວງແຜນການ ແລະ ການລົງທຶນ);
3. ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ;
4. ບົດສຳຫຼວດ-ອອກແບບໂຄງການ;
5. ໃບຢັ້ງຢືນແບບແຕ້ມ ແລະ ມູນຄ່າໂຄງການ ຂອງຂະແໜງການທີ່ກ່ຽວຂ້ອງ (ເອກະສານຢັ້ງຢືນການປະເມີນມູນຄ່າໂຄງການ);
6. ໃບຢັ້ງຢືນການປະເມີນໂຄງການ (ອອກໂດຍ ຂະແໜງການແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ);
7. ໃບໂອນສິດນຳໃຊ້ທີ່ດິນ (ໃນກໍລະນີນຳໃຊ້ທີ່ດິນຂອງປະຊາຊົນ).

ສຳລັບໂຄງການ ປະເພດ I, II ແລະ III ທີ່ນຳໃຊ້ເຕັກນິກສູງ ຕ້ອງປະກອບເອກະສານເພີ່ມຕື່ມ ດັ່ງນີ້:

1 ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກ;
2 ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ (ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການຊັບພະຍາກອນ ແລະ ທຳມະຊາດ).

2) ໂຄງການສົ່ງເສີມວິຊາການທີ່ຕິດພັນກັບການກໍ່ສ້າງ ຕ້ອງປະກອບເອກະສານ ດັ່ງນີ້:
1. ບົດສະເໜີໂຄງການ;
2. ແຜນດຳເນີນງານ;
3. ໃບປະເມີນມູນຄ່າໂຄງການ;
4. ໃບຢັ້ງຢືນການປະເມີນໂຄງການ (ອອກໂດຍ ຂະແໜງການແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ).

3) ໂຄງການສະໜອງວັດຖຸປະກອນ, ຕ້ອງປະກອບເອກະສານ ດັ່ງນີ້:

1. ບົດສະເໜີໂຄງການ;
2. ໃບປະເມີນລາຄາ;
3. ໃບກຳນົດຂໍ້ມູນສະເພາະຂອງວັດຖຸປະກອນ;
4. ໃບຢັ້ງຢືນການປະເມີນໂຄງການ (ອອກໂດຍ ຂະແໜງການແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ).

## IV. ການພິຈາລະນາໂຄງການລົງທຶນຂອງລັດຂອງຂະແໜງການ

- ເງື່ອນໄຂພື້ນຖານໃນການພິຈາລະນາຮັບເອົາໂຄງການລົງທຶນເຂົ້າໃນແຜນການລົງທຶນຂອງລັດ ມີດັ່ງນີ້:
  1. ສອດຄ່ອງກັບແຜນພັດທະນາ 5 ປີ ຂອງຂະແໜງການ, ແຜນເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
  2. ເປັນໂຄງການທີ່ຮັບປະກັນໃຫ້ມີປະສິດທິຜົນສູງທາງດ້ານເສດຖະກິດ-ສັງຄົມ;
  3. ເປັນໂຄງການທີ່ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ, ບໍ່ແຕະຕ້ອງປູຊະນີຍະສະຖານ, ວັດຖຸບູຮານ, ປ່າສະຫງວນ, ປ່າປ້ອງກັນ ຫຼື ທີ່ດິນ ຊຶ່ງໄດ້ຮັບອະນຸຍາດໃຫ້ນຳໃຊ້ ເພື່ອສາທາລະນະປະໂຫຍດແລ້ວ;
  4. ມີເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3.1.4 ຂອງຄຳແນະນຳສະບັບນີ້;
  5. ໄດ້ຮັບການເຫັນດີຈາກກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;

  ສຳລັບໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ຕ້ອງມີການຢັ້ງຢືນແຫຼ່ງທຶນຈະແຈ້ງກ່ອນ ຈຶ່ງສາມາດກຳນົດເອົາໂຄງການນັ້ນເຂົ້າໃນແຜນການລົງທຶນຂອງລັດ.
- ກົມແຜນການ ແລະ ການຮ່ວມມື ເປັນໃຈກາງໃນການສັງລວມເອກະສານການສະເໜີໂຄງການ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຂອງກະຊວງ, ພະແນກສາຍຕັ້ງ ແລະ ກະຊວງກ່ຽວຂ້ອງ; ຈັດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ຄົ້ນຄວ້າ, ປະເມີນມູນຄ່າໂຄງການ ແລະ ປະກອບຄຳເຫັນ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດທີ່ກຳນົດໄວ້ ບົນພື້ນຖານຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລ້ວລາຍງານການນຳກະຊວງ ເພື່ອຊາບ ແລະ ມີທິດຊີ້ນຳ.
- ໃນກໍລະນີໂຄງການທີ່ນຳສະເໜີ ກວມລວມເອົາຫຼາຍບັນຫາ ແລະ ຕິດພັນກັບຂະແໜງການອື່ນ ແມ່ນຕ້ອງໄດ້ປະສານງານ ແລະ ຂໍຄຳເຫັນຕາມລະບຽບການ ເພື່ອເປັນການແກ້ໄຂບັນຫາແຕ່ຫົວທີ ແລະ ຫຼີກລ້ຽງຄວາມສ່ຽງການເກີດບັນຫາຕາມມາໃນພາຍຫຼັງ.

## V. ຂັ້ນຕອນ ແລະ ກຳນົດເວລາຂອງການສະເໜີໂຄງການລົງທຶນຂອງລັດຂອງຂະແໜງການ

ການສະເໜີໂຄງການທີ່ຈະນຳໃຊ້ງົບປະມານແຫ່ງລັດ ບ້ວງຂອງກະຊວງ ປະເພດ I, II, III, IV ແລະ V, ພາກສ່ວນຜູ້ສະເໜີໂຄງການ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ຕາມຂໍ້ 3.1.4 ຫຼື ລະບຽບການອື່ນທີ່ກ່ຽວຂ້ອງ ແລ້ວນຳສະເໜີມາຍັງ ກະຊວງພະລັງງານ ແລະ ບໍ່ແຮ່ ຢ່າງຊ້າບໍ່ໃຫ້ກາຍຕົ້ນເດືອນ 4 (ເມສາ) ຂອງແຕ່ລະປີ ເພື່ອຄົ້ນຄວ້າ ແລະ ສະເໜີພິຈາລະນາ ຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ ຫຼື ນະຄອນຫຼວງ ທີ່ຈະນຳໃຊ້ງົບປະມານແຫ່ງລັດ ບ້ວງຂອງແຂວງ ຫຼື ນະຄອນຫຼວງ ໂຄງການປະເພດ I, II, III, IV ແລະ V ແມ່ນໃຫ້ນຳສະເໜີໄປຍັງ ພະແນກ

ແຜນການ ແລະ ການລົງທຶນແຂວງ ຫຼື ນະຄອນຫຼວງ ເພື່ອຄົ້ນຄວ້າ ແລະ ສະເໜີພິຈາລະນາຕາມຂັ້ນຕອນ ຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການສະເໜີໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ພາກສ່ວນສະເໜີ ຕ້ອງໄດ້ດຳເນີນການສຶກສາຄວາມເປັນໄປໄດ້ ແລະ ສຳຫຼວດ-ອອກແບບ ເສຍກ່ອນ, ເມື່ອເຫັນວ່າມີຄວາມເປັນໄປໄດ້ ແລ້ວຈຶ່ງສາມາດສະເໜີເປັນໂຄງການໄດ້ ໝາຍວ່າ ຕ້ອງໄດ້ສະເໜີໂຄງການສົ່ງເສີມວິຊາການທີ່ຕິດພັນກັບການກໍ່ສ້າງ ເສຍກ່ອນ, ແລ້ວຈຶ່ງສະເໜີເປັນໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ. ແຕ່ໃນກໍລະນີ ໄດ້ດຳເນີນການສຶກສາຄວາມເປັນໄປໄດ້ ແລະ ສຳຫຼວດ-ອອກແບບ ສຳເລັດແລ້ວ ແມ່ນສາມາດສະເໜີເປັນໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການ.

## VI. ການຈັດຕັ້ງປະຕິບັດ

1. ມອບໃຫ້ ກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແນະນຳ ແລະ ປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.
2. ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຖ້າຫາກພົບເຫັນບັນຫາ/ຄວາມຫຍຸ້ງຍາກ ໃຫ້ລາຍງານການນຳກະຊວງ ເພື່ອຊາບ ແລະ ມີທິດຊີ້ນຳຄົ້ນຄວ້າປັບປຸງແກ້ໄຂໃຫ້ທັນເວລາ.

## VII. ຜົນສັກສິດ

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີ

ກະຊວງພະລັງງານ ແລະ ບໍ່ແຮ່ ລັດຖະມົນຕີ

ປອ. ດາວວົງ ພອນແກ້ວ